ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໔໔/ປພຖຊ/໐໕໐໔໐໙**

# ບົດຄວາມ

## ຕອບໂຕ້ທ່ານສຸທັມ ສາກົນນິຍົມ

## ທູດລາວ ປະຈຳປະເທດ Belgique. ( ຕອນ 1).

ທ່ານ ໄດ້ອອກມາໂອ້ລົມກັບ ຄົນລາວນອກປະເທດ ໂດຍສະເພາະພາກສ່ວນ ຢູ່ທາງ Europe ຜ່ານ ລາຍການສຽງແຄນແມ່ນ້ຳຂອງ ຢູ່ປະເທດຝຣັ່ງເສດ. Radio2-20-12-08 ໂດຍແມ່ນທ່ານ ດວງວີ ປະທຸມມະດວງສີ ເປັນຜູ້ຈັດລາຍການ ໃຫ້ອອກມາໂອ້ລົມ ສົນທະນາ.

-ທ່ານ ດວງວີ ໄດ້ຕັ້ງຄຳຖາມວ່າ "ການບໍລິຫານປະເທດຊາດ ຂອງພັກຣັດ ຜ່ານລະຍະ 33 ປີ...ມີອັນໃດດີ ແລະອັນໃດບໍ່ດີ ຫລື ມີອັນໃດ ເປັນທາງບວກ ແລະອັນໃດ ເປັນທາງລົບ?" ທ່ານທູດ ໄດ້ອະທິບາຍກ່ຽວກັບຈຸດດີ ອັນພົ້ນເດັ່ນ ແລະຈຸດອ່ອນ ພໍສລຸບໄດ້ດັ່ງນີ້:

1. ມີສະຖັຍຣະພາບທາງການເມືອງຢູ່ໃນລາວ.
2. ມີຄວາມສາມະຄີ ຂອງປະຊາຊົນ ບັນດາເຜົ່າ, ເປັນເຜົ້າປ່ຽວດຽວ.
3. ມີເສຖກິດຂຍາຍຕົວຢ່າງຕໍ່ເນື່ອງ.
4. ມີການສ້າງສາພັທນາປະເທດ ຢ່າງບໍ່ເຄີຍມີມາກ່ອນ, ເປັນຕົ້ນ: ຂົວຂ້າມ ແມ່ນ້ຳຂອງ, ທາງຣົດໄຟ,ເສັ້ນທາງເລກທີ 8,9 ແລະ ເລກທີ 12, 13 ໃຕ້. ທ່ານທູດ ສລຸບສິ່ງທີ່ພົ້ນເດັ່ນ ຕາມຕຳນານບ້ານ ເມືອງຈະເຣີນ ຂອງພັກຣັດວ່າ ມີ "ຊ້າງເຜືອກ-ຫີນພູ-ງູໃຫຍ່"

ໄດ້ເກີດຂຶ້ນ ໝົດແລ້ວ! ສ່ວນຈຸດອ່ອນທີ່ເປັນຜົນລົບນັ້ນ ກໍມີຫລາຍ; ໂດຍສະເພາະ ຄວາມ ຮັບຮູ້ ຂອງ ພນັກງານ ບໍ່ເລີກ, ປະຕິບັດວຽກງານ, ບອກແນວນຶ່ງ...ຊໍ້າພັດເຮັດອີກ ແນວນຶ່ງ, ການສໍ້ຣາດ ບັງຫລວງກໍຍັງມີ, ພັຍສັງຄົມ, ຕິດຢາບ້າ, ກິນເຫລົ້າເມົາສຸຣາ ກໍຍັງ ມີຫລາຍ. ແຕ່ ຣັຖບານ ກໍບໍ່ໄດ້ປ່ອຍປະລະເລີຍ...ອັນນີ້, ມັນມີທົ່ວໂລກ, ບໍ່ແມ່ນຣັຖບານ ຈະເມີນເສີຍ, ຕ້ອງເບິ່ງ ເຈຕນາ ຂອງຣັຖບານ. ແຕ່ ພັກຣັດ ບໍ່ໄດ້ໃຊ້ມາຕການ ປາບປາມ, ມີແຕ່ໄກ່ເກັ່ຽ, ຕັກເຕືອນ ສຶກສາອົບຣົມຜູ້ກະທຳຜິດເທົ້ານັ້ນ. ສ່ວນບັນຫາອື່ນໆ ທີ່ທ່ານ ດວງວິ ປະທຸມມະດວງສີ ໄດ້ຖາມ ເພີ່ມຕື່ມ ກໍຄື ການໃຫ້ຄົນລາວນອກ ປະເທດ ຖື 2 ສັນຊາດ, ການວິຊາ ເຂົ້າເມືອງລາວ ຕລອດການ, ທ່ານຕອບວ່າ "ຍັງບໍ່ທັນມີການ ປະຕິບັດ. ເຖິງແມ່ນວຽດນາມ ແລະຂແມນ ຈະໄດ້ເຮັດມາກ່ອນແລ້ວ ກໍຕາມ, ເພາະພວກເຮົາບໍ່ແມ່ນວຽດນາມ, ບໍ່ແມ່ນຂແມນ.

ການອອກມາໂອ້ລົມ ໂຄສະນາຂອງທ່ານທູດ ສຸທັມ ສາກົນນິຍົມ ເປັນການອອກມາໂຄສະນາ ບິດເບືອນ ຄວາມຈິງ ໃຫ້ຄົນລາວນອກປະເທດ ຫລົງເຊື່ອ, ໂດຍສະເພາະ ຄົນລາວ ຈາກປະເທດ ຝຣັ່ງເສດ ທີ່ເຄີຍໄດ້ຮັບຄວາມເຈັບແສບມາກ່ອນແລ້ວ ສມັຍເປັນນັກສຶກສາ ໄດ້ພາກັນ ກັບຄືນ ປະເທດຫລາຍລຳຍົນ ຫວັງຈະໄດ້ປະກອບສ່ວນ ສ້າງສາປະເທດຊາດ. ແຕ່ເມື່ອກັບຮອດ ເມືອງລາວ ແລ້ວ ພາກັນລອຍນໍ້າຂອງ ຂ້າມຟາກ ເກືອບບໍ່ທັນ! ຍ້ອນພັກບໍ່ປະຕິບັດຕາມຄຳເວົ້າທີ່ມາຊັກຊວນ ເອົາເມືອປະເທດ ແບບ ໜ້າມື ເປັນຫລັງມື!

ຄົນລາວຢູ່ນອກປະເທດ ດຽວນີ້ ພວກເຂົາຫູແຈ້ງຕາໃສແລ້ວ! ບໍ່ໄດ້ຖືກຄອບງຳ, ປິດຫູບັງຕາ ໃຫ້ ກາຍເປັນຄົນກືກ ຄືກັບພໍ່ແມ່ພີ່ນ້ອງ ປະຊາຊົນລາວຢູ່ໃນປະເທດ ພາຍໃຕ້ຣະບອບ ຜເດັດການ ພັກດຽວ ມາໂດຍຕລອດນັ້ນ, ພຽງແຕ່ ຖາມຕົນເອງວ່າ ເປັນດ້ວຍເຫດໃດພວກຕົນ ຈິ່ງຕັດສິນໃຈ ໂຕນໜີ ຈາກປະເທດ ໂດຍສ່ຽງຕໍ່ຊີວິດ ອັນມີດມົນ. ຄຳຕອບທີ່ພວກເຂົາລືມບໍ່ໄດ້ ກໍຄື "ພັກຣັດ ໄຮ້ມະນຸສທັມນັ້ນເອງ!"

ທ່ານທູດ ໄດ້ເນັ້ນໜັກເຖິງການສ້າງສາພັທນາປະເທດ ວ່າ ມີຄວາມຫຍຸ້ງຍາກຫລາຍທີ່ສຸດ! ຍ້ອນ ປະເທດລາວ, ກ່ອນການສ້າງຕັ້ງ ເປັນ ສປປລາວ 1975 ນັ້ນ, ປະເທດລາວ ແມ່ນ ບໍ່ມີຫຍັງຈັກດີ້!...

ພວກເຮົາປະຊາຊົນລາວ ບໍ່ໜ້າເຊື່ອເລີຍ ວ່າ ທ່ານທູດສຸທັມ ສາກົນນິຍົມ ຈະເປັນເສນາ ໝາກຊີ້ກາ, ເວົ້າອອກມາໄດ້ ຢ່າງເຕັມສິບເຕັມປາກຄືດັ່ງນີ້!- ການທີ່ເມືອງລາວ ບໍ່ມີຫຍັງ ເຫລືອໄວ້... ກໍຍ້ອນວ່າ ພັກຣັດ ເຂົ້າມາແລ້ວ, ປຸ້ນຈີ້ ກວາດຕ້ອນເອົາໄປໝົດ! ໂດຍສະເພາະ ເງິນກີບ ຂອງປະຊາຊົນ ລາວ ໃນສມັຍ ຣັຖບານ ແຫ່ງພຣະຣາຊອານາຈັກລາວ ກ່ອນປີ 1975 ຊຶ່ງມີ 5 ປະເທດຄໍ້າປະກັນ. ອັຕຣາ ແລກປ່ຽນ 250 ກີບ ຕໍ່ 1 ດອນລາສະຫະຣັດ ພັກຣັດ ເຂົ້າມາປຸ້ນເອົາເງິນ ຂອງປະຊາຊົນລາວ ໄປໝົດແລ້ວ, ເອົາເງິນປົດປ່ອຍ ຊຶ່ງເປັນພຽງເສດເຈັ້ຽລ້າໆ...ເຂົ້າມາໃຊ້ແທນ, ເງິນຂອງປະຊາຊົນ ທົ່ວປະເທດ ເປັນຈຳນວນມະຫາສານນັ້ນ ພັກຣັດ ໄດ້ເອົາໄປໄວ້ໃສ?... ຂໍໃຫ້ທ່ານທູດ ຈົ່ງໄດ້ຕອບຂໍ້ຂ້ອງໃຈ

ຂອງປະຊາຊົນນີ້ ໃຫ້ພວກເຂົາໄດ້ຮູ້ນຳແດ່, ປຸ້ນເອົາໄປແລ້ວ ຢ່າເມີນເສີຍ! ບາບໄລ່ເວນທັນດີ!.. ຖ້າຫາກເອົາເງິນເຫລົ່ານັ້ນ ມາສ້າງໂຮງຮຽນ, ສ້າງໂຮງໝໍ, ສ້າງນັກວິຊາການ, ສ້າງຖນົນຫົນທາງ... ແນ່ນອນວ່າ ເມືອງລາວ ກໍຈະດີຂຶ້ນ ກວ່ານີ້ຫລາຍເທົ່າ! ສນັ້ນ, ທ່ານທູດ ຈະເວົ້າວ່າ ເມືອງລາວ ກ່ອນປີ 1975 ບໍ່ມີຫຍັງ ໄດ້ຢ່າງໃດ? ພັກຣັດ, ນອກຈາກຈະປຸ້ນເອົາເງິນກີບ ຂອງປະຊາຊົນ ໄປໝົດແລ້ວ, ຍັງແບ່ງຂາຍດິນສະຖານທູດລາວ ຢູ່ຝຣັ່ງເສດ, ຢູ່ໄທຍ. ຊໍ້າບໍ່ພໍ, ຍັງເອົາປະເທດຊາດ ຂາຍໃຫ້ວຽດນາມ ຕື່ມອີກ! ໂດຍການເຊັນ ສັນຍາ ມີຕພາຍ 25 ປີ ແລະຕໍ່ໄດ້ອີກ ເທື່ອລະ 10 ປີ ແລະຕໍ່ໄດ້ເລື້ອຍໆ ຢ່າງບໍ່ມີວັນສິ້ນສຸດ... ອັນເປັນ ເງື່ອນໄຂ ໃຫ້ວຽດນາມ ໄດ້ເອົາແຜ່ນດິນລາວ ເປັນບ່ອນ ແຜ່ອຳນາດ ອິດທິພົນ, ເປັນບ່ອນຂຸດຄົ້ນ ເອົາວັດຖຸດິບ, ໄມ້ທ່ອນ ແລະທາດແຫ່ໂລຫະ ອອກໄປ ເພື່ອປ້ອນ ໂຮງຈັກໂຮງງານໃນປະເທດຂອງເຂົາ ຢ່າງຫ້າຫາຍ ຕໍ່ນ້ຳໃຈ ຂອງຄວາມເປັນຊາດເອກຣາດຂອງຄົນລາວ ຢ່າງຮ້າຍແຮງເຫລືອທີ່ສຸດ!.

ໂປຣດຕິດຕາມຕອນ ທີ 2 ຕໍ່ໄປ.

**ສູນກາງຕາງໜ້າ**
**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**
**ກອງວິຈັຍ**
**ວັນທີ ໐໕ ກຸມພາ ໒໐໐໙**